ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈັນທະບູລີ

ຫ້ອງວ່າການປົກຄອງເມືອງຈັນທະບູລີ

ເລກທີ 859 /ຫວກ.ຈລ

ວັນທີ 25 May 2017

# ແຈ້ງການ

ເຖິງ: ບັນດາຫ້ອງການ, ກອງບັນຊາການ ປກຊ, ປກສ, ພະນັກງານ, ທະຫານ, ຕຳຫຼວດ ໂຮງຮຽນ, ຫົວໜ່ວຍເສດຖະກິດ ຫ້າງຮ້ານ ແລະ ບ້ານອ້ອມຂ້າງເມືອງຈັນທະບູລີ ທີ່ນັບຖື

**ເລື່ອງ:ສ້າງຂະບວນການ ອອກແຮງງານອານາໄມຕາມເສັ້ນທາງສາຍຫຼັກ 2 ເສັ້ນທາງ: ຖະໜົນເຈົ້າຟ້າງຸ່ມ, ແລະ ຖະໜົນດອນຈັນ (ເສັ້ນທາງແຄມຂອງ)**

ເພື່ອເປັນການຂໍານັບຮັບຕ້ອນ ແລະ ສະເຫຼີມສະຫຼອງ ວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ (ວັນທີ 1 ເດືອນ 6) ທີ່ຈະໝູນວຽນມາເຖິງອີກວາລະໜຶ່ງ.

ຫ້ອງວ່າການ ເມືອງ ຈັນທະບູລີ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຫົວໜ້າ ຫ້ອງການ, ກອງບັນຊາການ ປກຊ, ປກສ, ພະນັກງານ, ທະຫານ, ຕຳຫຼວດ ໂຮງຮຽນ, ຫົວໜ່ວຍເສດຖະກິດ ຫ້າງຮ້ານ ແລະ ບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເມືອງຈັນທະບູລີ ໃຫ້ສ້າງຂະບວນການອອກແຮງງານວັນເສົາແດງໂດຍການອະນາໄມ, ປັດກວດ, ຖາງຫຍ້າ ຕາມຖະໜົນຫົນທາງ ໃນວັນເສົາ ທີ 27/5/2017 ເລີ່ມເວລາ 6:30 ໂມງເຊົ້າ ເປັນຕົ້ນໄປ

ໂດຍມອບໃຫ້ ຄະນະພັກຜູ້ຊີ້ນຳບ້ານ, ເລຂາພັກບ້ານ, ນາຍບ້ານ ແລະ ພະນັກງານລົງກໍ່ສ້າງຮາກຖານບ້ານ ຫ້ອງການ, ໂຮງຮຽນ ຈັດຕັ້ງນຳພາໃນການອອກແຮງງານ ອະນາໄມໃຫ້ມີຄວາມສະອາດສວຍງາມ,ເຊິ່ງແຜນ ແລະ ລາຍລະອຽດແມ່ນມີຕາຕະລາງຕິດຂັດມາພ້ອມນີ້.

- ສ່ວນບັນດາບ້ານທີ່ບໍ່ມີລາຍຊື່ແມ່ນໃຫ້ອອກແຮງງານຕາມເສັ້ນທາງໜ້າບ້ານເຮືອນຂອງໃຜລາວ ມອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງ ນຳພາພະນັກງານທັງໝົດ ແລະ ປະຊາຊົນເຂົ້າຮ່ວມໃຫ້ເປັນຂະບວນການຢ່າງຟົດຟື້ນ.

ດັ່ງນັ້ນຈຶ່ງໄດ້ແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ

ຫົວໜ້າຫ້ອງວ່າການ ເມືອງຈັນທະບູລີ

ແກ້ວປະເສີດ ໄຊປັນຍາ
Keopaseuth Xaypanya

ໝາຍເຫດ:

ອຸປະກອນການອອກແຮງງານແມ່ນກຸ່ມຕົນເອງ

ຕິດຕໍ່: 020 22235431, 02058805932